# ສະເໜີ

# ການສ້າງຕັ້ງຄະນະປະສານງານຂັ້ນແຂວງກ່ຽວກັບ ວຽກງານທຸລະກິດກະສິກຳ ແລະຊາວກະສິກອນ

# ໂຄງສ້າງການນຳສະເໜີ

1. ເຫດຜົນ ຫລື ຄວາມຈຳເປັນໃນການສ້າງ
2. ຈຸດປະສົງ
3. ພາລະບົດບາດ
4. ໂຄງສ້າງ ຄະນະປະສານງານ ແລະສະມາຊິກ
5. ກອງເລຂາ : ໜ້າທີ່ ແລະຄວາມຮັບຜິດຊອບ
6. ວາລະການປະຊຸມ ແລະວິທີການເຮັດວຽກ
7. ບາດກ້າວຕໍ່ໄປ

# ຄວາມຈຳເປັນໃນການສ້າງ

- ພາກທຸລະກິດຂອງລາວ ແມ່ນກຳລັງປະເຊີນກັບ ໂອກາດ ແລະສິ່ງທ້າທາຍໃນດ້ານຕ່າງໆຫລາຍຂື້ນ:
  - ການເຊື່ອມໂຍງເສດຖະກິດໃນອານຸພາກພື້ນແມ່ນ້ຳຂອງ(GMS),
  - ຄວາມຕົກລົງຮຸ້ນສ່ວນທາງດ້ານເສດຖະກິດລະດັບພູມີພາກ(RCEP),
  - ພາຍໃນອາຊຽນກັນເອງ ແລະ
  - ຈະມີຜົນກະທົບຢ່າງໃຫຍ່ຫລວງຕໍ່ການຜະຫລິດເທກໂນໂລຊີ ແລະຮູບແບບທຸລະກິດໃຫມ່ ເປັນຂະບວນການ, ຊຶ່ງມັກຈະເອີ້ນວ່າ ການປະຕິຮູບອຸດສະຫະກຳ 4.0.
  - ຜົນກະທົບຂອງການແຜ່ລະບາດຂອງພະຍາດປອດອັກເສບສາຍພັນໃຫມ່ (COVID-19),
  - ການປ່ຽນແປງດິນຟ້າອາກາດ

- ທິດທາງແຜນການພັດທະນາເສດຖະກິດ - ສັງຄົມ 5 ປີ ຄັ້ງທີ IX ປີ 2021 – 2025 ຂອງແຂວງຊຽງຂວາງ
  - ວາງຄາດໝາຍສູ້ຊົນເຮັດໃຫ້ຈັງຫວະການຂະຫຍາຍຕົວຂອງເສດຖະກິດ(GDP) ສະເຫລັ່ຍ ບໍ່ຫລຸດ 6,7% ຕໍ່ປີ.
  - ສູ້ຊົນລະດົມທຶນທົ່ສັງຄົມໃຫ້ໄດ້ 9.474, 13 ຕື້ກີບ.
    - ການລົງທຶນພາກເອກະຊົນ ແລະ ຕ່າງປະເທດໃຫ້ໄດ້ 4.683 ຕື້ ຫລື ກວມ 49,32% ແລະ
    - ສິນເຊື່ອທະນາຄານ 3.579 ຕື້  ຫລື ກວມ 38%
- ປະສົບການການຈັດກອງປະຊຸມປຶກສາຫາລື ກ່ຽວກັບການປັບປຸງສະພາບແວດລ້ອມໃນການດຳເນີນທຸລະກິດກະສິກຳ ໃນ ເມືອງພູກູດ ແລະ ໜອງແຮດ (ກໍລະນີ ການຄ້າຂາຍສາລີ)

ມັນເປັນສິ່ງສຳຄັນທີ່ ທຸລະກິດ ຕ້ອງໄດ້ຮ່ວມມືຢ່າງໃກ້ສິດ ກັບພາກລັດ ໃນແຕ່ລະຂັ້ນ ເພື່ອໃຫ້ພາກທຸລະກິດ ໂດຍສະເພາະ ແມ່ນ SME ແລະ ຈຸນລະວິສະຫາກິດ ສາມາດຮັບສິ່ງຕ່າງໆ ທີ່ຈະເກີດຂຶ້ນ.

# ຈຸດປະສົງ

ຄະນະປະສານງານຂັ້ນແຂວງກ່ຽວກັບທຸລະກິດກະສິກຳ ແລະຊາວກະສິກອນ ແມ່ນເພື່ອ:

- ເພື່ອເປັນເວທີໃນການປຶກສາຫາລື, ການປະສານງານ ແລະຖອດຖອນບົດຮຽນກ່ຽວກັບປະສົບການຜ່ານມາໃນການພັດທະນາທຸລະກິດກະສິກຳ ແລະ ການບໍລິການໃຫ້ຊາວກະສິກອນລາຍນ້ອຍ, ແລະ
- ເພື່ອກຳນົດທາງເລືອກ ແລະໂອກາດ ໃນການສົ່ງເສີມ ການພັດທັດທະນາທຸລະກິດກະສິກຳ ພາຍໃນແຂວງໃນຮູບແບບທີ່ສ້າງຄວາມເຂັ້ມແຂງໃຫ້ຊາວກະສິກອນລາຍນ້ອຍ, ລວມທັງບັນດາທາງເລືອກດ້ານນະໂຍບາຍ ແລະ ການສ້າງຄວາມອາດສາມາດ ທີ່ເປັນບຸລິມະສິດ

# ພາລະບົດບາດ

- ເພື່ອຊອກຫາໂອກາດ ແລະທາງເລືອກ ເພື່ອ ສົ່ງເສີມການພັດທະນາທຸລະກິດກະສິກຳ ເພື່ອສ້າງຄວາມເຂັ້ມແຂງໃຫ້ຊາວກະສິກອນຂະໜາດນ້ອຍ, ລວມທັງນະໂຍບາຍຂອງລັດຖະບານ (ທີ່ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ສຳລັບການບໍລິການໃຫ້ຊາວກະສິກອນລາຍນ້ອຍ ແລະ ການພັດທະນາທຸລະກິດ)
- ຈັດໃຫ້ມີການແລກປ່ຽນຂໍ້ມູນຂ່າວສານ (ລວມທັງທາງ ອອນລາຍ) ແລະ ຮ່ວມກັນ ເຂົ້າໃຈເປັນເອກະພາບ ກ່ຽວກັບບັນຫາທີ່ເກີດຂຶ້ນໃຫມ່ ຮ່ວມກັບພາກລັດ, ຄູ່ຮ່ວມພັດທະນາ ແລະພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການ ພັດທະນາ ທຸລະກິດກະສິກຳ ແລະຊາວກະສິກອນລາຍນ້ອຍ
- ດຳເນີນການສຶກສາກ່ຽວກັບບັນຫາທີ່ສຳຄັນກ່ຽວຂ້ອງກັບການບໍລິການຊາວກະສິກອນລາຍນ້ອຍ ແລະ ການພັດທະນາ ທຸລະກິດກະສິກຳ ເພື່ອສັງລວມ ແລະ ຖອດຖອນບົດຮຽນ ທີ່ເກີດຂຶ້ນພາຍໃນປະເທດ
- ນຳຜົນການສຶກສາ ແລະການປຶກສາຫາລືສະເໜີໃຫ້ຂັ້ນເທິງພິຈາລະນາ ແລະຂໍທິດຊີ້ນຳ
- ປະສານສົມທົບກັບ SSWG - FAB ຫລື ເຄືອຂ່າຍອື່ນໆ ເພື່ອອຳນວຍຄວາມສະດວກໃນການປະສານງານ ລະຫວ່າງຂະແໜງການ ແລະເຊື່ອມໂຍງບັນຫາທີ່ເຊື່ອມສານ, ໂດຍສະເພາະບັນຫາທີ່ເຊື່ອມໂຍງລະຫວ່າງຂະແໜງການ
- ປະສານສົມທົບ ກັບ ສະພາການຄ້າ ແລະອຸດສະຫະກຳແຫ່ງຊາດລາວ, ພາກລັດທີ່ກ່ຽວຂ້ອງໃນລະດັບຕ່າງໆ, TPSWG ແລະເຄືອຂ່າຍຕ່າງໆ ເພື່ອສ້າງເງື່ອນໄຂແວດລ້ອມດຳເນີນທຸລະກິດທີ່ດີ ແລະສ້າງຄວາມເຂັ້ມແຂງໃຫ້ SME ແລະຈຸລະວິສະຫາກິດໃຫ້ມາດແຂ່ງຂັນໄດ້.

# ໂຄງສ້າງ ຄະນະປະສານງານ ແລະສະມາຊິກ

- ຄະນະປະທານ
  - ທ່ານ ຮອງເຈົ້າແຂວງ ຜູ້ຊີ້ນຳວຽກງານເສດຖະກິດ ເປັນປະທານ
  - ພະແນກກະສິກຳ ແລະປ່າໄມ້ ເປັນ ຮອງ ປະທານ
  - ພະແນກອຸດສະຫະກຳ ແລະການຄ້າ ເປັນ ຮອງ ປະທານ
  - ສະພາການຄ້າ ແລະອຸດສະຫະກຳແຂວງ ເປັນຄະນະ
  - ເຄືອຂ່າຍຊາວກະສິກອນແຂວງ ເປັນ ຄະນະ

- ກອງເລຂາ
  - ກອງເລຂາ ແມ່ນ ຄະນະເລຂາທິການຂອງສະພາການຄ້າ ແລະ ອຸດສະຫະກຳແຂວງ

- ສະມາຊິກ:
  - ພາກລັດ ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ
  - ພາກທຸລະກິດ
  - ຄູ່ຮ່ວມພັດທະນາ ແລະໂຄງການຕ່າງໆ

# ກອງເລຂາ : ໜ້າທີ່ ແລະຄວາມຮັບຜິດຊອບ

## ໜ້າທີ່ຂອງກອງເລຂາມີດັ່ງນີ້:

- ສ້າງແຜນປະຈຳປີ ແລະຈັດຕັ້ງແຜນກິດຈະກຳຕາມທີ່ແຜນໃດ້ຮັບຮອງ
- ປະສານງານ ກັບບັນດາສະມາຊິກກ່ຽວກັບແຜນງານ, ການຈັດຕັ້ງປະຕິບັດ, ການເຮັດບົດລາຍງານ
- ຈັດຕັ້ງກອງປະຊຸມຄະນະປະສານງານ ລວມທັງກະກຽມວາລະປະຊູມ, ບັດເຊີນ ແລະການກະກຽມຕ່າງໆ
- ປະສານງານກັບ ກອງເລຂາ ຄະນະເຮັດວຽກຍ່ອຍກ່ຽວກັບ ຊາວກະສິກອນ ແລະທຸລະກິດກະສິກຳ ສູນກາງ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ
- ຮັບປະກັນໃຫ້ສະມາຊິກເປັນເຈົ້າການຕໍ່ບັນດາກິດຈະກຳ, ຂະບວນການພັດທະນາ ແລະການປຶກສາຫາລືດ້ານນະໂຍບາຍ
- ຮັບປະກັນໃນການຕິດຕາມບັນດາໜ້າວຽກນຳບັນດາສະມາຊິກ ແລະເອະສານຕ່າງໆ
- ເຮັດບົດບັນທຶກກອງປະຊຸມ ແລະການປຶກສາຫາລື ແລະແຈກຢາຍໃຫ້ສະມາຊິກ

# ວາລະການປະຊຸມ ແລະວິທີການເຮັດວຽກ

- ກອງປະຊຸມຈະໄດ້ຈັດຂຶ້ນຢ່າງນ້ອຍ 2 ຄັ້ງຕໍ່ປີ.

  (ຖ້າມີວຽກອັນຈຳເປັນ ແລະ ຮີບດ່ວນ ຕາມການສະເໜີ ຂອງປະທານ, ຄະນະປະທານ ຫລື ສະມາຊິກ, ກອງເລຂາສາມາດສາມາດສະເໜີ ເປີດກອງປະຊູມຕາມຄຳສະເໜີດັ່ງກາວ).

ກອງປະຊຸມຈະໄດ້ຈັດຂຶ້ນໃນກໍລະນີຕໍ່ໄປນີ້:

- ເພື່ອການລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳ ແລະການສະເໜີແຜນວຽກ
- ຕາມຫົວຂໍ້ຂອງກອງປະຊຸມ: ຈະເລັງໃສ່ບັນຫາທາງດ້ານເຕັກນິກ\ຫົວຂໍ້ ທີ່ສາມາດຈັດຂຶ້ນໄດ້ຫລາຍຄັ້ງໃນ 1 ປີ, ອາດຈະຈັດຂຶ້ນ ເພື່ອຂໍຄຳຄິດຄຳເຫັນຈາກສະມາຊິກ, ນຳສະເໜີຜົນການສຶກສາໃນຫົວຂໍ້ຕ່າງໆ ແລະເພື່ອຊ່ວຍປຶກສາຫາລືກ່ຽວກັບບັນຫາທາງດ້ານເທັກນິກຕ່າງໆ

ບົດລາຍງານຈາກກອງປະຊູມຕ່າງໆ, ບົດລາຍງານການສຶກສາ ແລະ ອື່ນໆ ແມ່ນ ຄົນທົ່ວໄປສາມາດເຂົ້າເຖິງໄດ້.

# ບາດກ້າວຕໍ່ໄປ

- ປັບປຸງເນື້ອໃນໃຫ້ສົມບູນ ຕາມຄໍາແນະນໍາ ຈາກກອງປະຊຸມ
- ນໍາສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງພິຈາລະນາ ແລະຮັບຮອງ
- ຄາດວ່າໃຫ້ສໍາເລັດ ໃນ ເດືອນ ມີນາ 2021

# ຂອບໃຈ